ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ສູນສະຖິຕິແຫ່ງຊາດ

ຫ້ອງການ

ເລກທີ: 2317 /ຫກ.1.3

ວັນທີ 6 ພະຈິກ 2023

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ຫ້າງຮ້ານ,ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ.

ສູນສະຖິຕິແຫ່ງຊາດ ໄດ້ຮັບທຶນຊ່ວຍເຫຼືອຈາກໂຄງການຮ່ວມມືສະຖິຕິລາວ-ລຸກຊຳບວກເພື່ອດຳເນີນການສົມທຽບລາຄາການຈັດຊື້ **ພາຫະນະ** ( ລົດ ) ຮັບໃຊ້ວຽກງານສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນໂຄງການ ຮ່ວມມືລາວ-ລຸກຊຳບວກໄລຍະ II ຈຶ່ງແຈ້ງເຊີນມາຍັງຫ້າງຮ້ານ,ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງ ປະມູນສົມທຽບລາຄາສຳລັບການຈັດຊື້: ຈັດຊື້ **ພາຫະນະ** ( ລົດ ) ເງື່ອນໄຂຄວາມຕ້ອງການດັ່ງລຸ່ມນີ້:

1.1 ປະເພດພາຫະນະທີ່ແລ່ນໃນເງື່ອນໄຂເສັ້ນທາງທີ່ທຸລະກັນດານ ປະເພດ 4 ລໍ້ ( 4 –**wheel drive** )

1.2 ແຮງມ້າ 1990

1.3 ປະເພດພາຫະນະເດີນທາງໄກເຖິງ 500 ກິໂລແມັດ ຫຼືຫລາຍກ່ວາ

1.4 ປະເພດບ່ອນນັ່ງ 4-5 ບ່ອນນັ່ງ

1.5 ຈັກປະຫຍັດນ້ຳມັນ ມີອາໄລໃນການສ້ອມແປງໃນທ້ອງຕະຫລາດ

2. ໄລຍະເວລາໃນການສົ່ງມອບແມ່ນ 90 **ວັນ**; (**ພາຍຫຼັງເຊັນສັນຍາ).**

3. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງປະມູນ ນັບແຕ່ວັນທີ **06** ພະຈິກ **2023** ເຖິງ ວັນທີ 05 ທັນວາ **2023** ຕາມເວລາໂມງລັດຖະການ.

4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ **10:00** ໂມງ ຂອງ ວັນທີ 05 ທັນວາ **2023** ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ **10:00** ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຊັ້ນ **3** ເບີ **311** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ສະຖານທີ່ບ້ານດົງນາໂຊກເໜືອ ເມືອງ ສີໂຄດຕະບອງນະຄອນຫຼວງວຽງຈັນໂທ/ແຟັກ: (**+021 214740** ) ເຊີ່ງລາຍລະອຽດແມ່ນຄັດຕິດມາພ້ອມນີ້.

**ຫົວໜ້າຫ້ອງການ**

ສູນສະຖິຕິແຫ່ງຊາດ ຫ້ອງການ

ພອງສະມຸດ ຄຳວານວົງສາ